ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3059 / ກງ

ນະຄອນຫຼວງວຽງຈັນ, ວັນທີ 27 ກັນຍາ 2018

# ຂໍ້ຕົກລົງ

## ວ່າດ້ວຍລະບຽບການຮັກສາເງິນແຮປະກັນໄພ ແລະ ການຄຸ້ມຄອງຄວາມສາມາດໃນການຊໍາລະໜີ້

- ອີງຕາມ ກົດໝາຍວ່າດ້ວຍການປະກັນໄພ ສະບັບເລກທີ 06/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງ, ພັດທະນາລັດວິສາຫະກິດ ແລະ ການປະກັນໄພ ສະບັບເລກທີ 1068 /ຄລປ ລົງວັນທີ 25 ກັນຍາ 2018.

### ລັດຖະມົນຕີກະຊວງການເງິນ ຕົກລົງ :

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດເງື່ອນໄຂໃນການຮັກສາເງິນແຮປະກັນໄພ ຂອງບໍລິສັດປະກັນໄພ ເພື່ອໃຫ້ສອດຄ່ອງກັບມາດຕະຖານການຮັກສາເງິນແຮປະກັນໄພຂອງສາກົນ, ຮັບປະກັນໃຫ້ການຄິດໄລ່ເງິນແຮປະກັນໄພມີຄວາມພຽງພໍ ແລະ ສອດຄ່ອງກັບສະພາບການດໍາເນີນທຸລະກິດ; ກໍານົດເງື່ອນໄຂກ່ຽວກັບຄວາມສາມາດໃນການຊໍາລະໜີ້ຂອງບໍລິສັດປະກັນໄພ ໃຫ້ສອດຄ່ອງກັບມາດຕະຖານການຊໍາລະໜີ້ຂອງສາກົນ, ປົກປ້ອງສິດຜົນປະໂຫຍດຂອງຜູ້ຊື້ປະກັນໄພ, ເຈົ້າໜີ້ ແລະ ສັງຄົມໂດຍລວມ, ຮັບປະກັນໃຫ້ບໍລິສັດປະກັນໄພມີຊັບສິນສ່ວນເກີນພຽງພໍເພື່ອທົດແທນຄວາມເສຍຫາຍທີ່ເກີດຈາກສັນຍາປະກັນໄພ, ພ້ອມທັງກໍານົດການປັບໃໝ ແລະ ມາດຕະການລົງໂທດຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້.

**ມາດຕາ 2 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບບໍລິສັດປະກັນໄພທົ່ວໄປ, ບໍລິສັດປະກັນຊີວິດ ແລະ ບໍລິສັດປະກັນໄພລວມ ທີ່ດໍາເນີນທຸລະກິດໃນ ສປປ ລາວ.

### ໝວດທີ 2
### ເງິນແຮປະກັນໄພ

**ມາດຕາ 3 ການຮັກສາເງິນແຮປະກັນໄພສໍາລັບບໍລິສັດປະກັນໄພທົ່ວໄປ**

ໃນຕະຫຼອດໄລຍະເວລາທີ່ດໍາເນີນທຸລະກິດຂອງບໍລິສັດປະກັນໄພທົ່ວໄປນັ້ນ, ບໍລິສັດປະກັນໄພທົ່ວໄປ ຕ້ອງຮັກສາເງິນແຮປະກັນໄພຕ່າງໆ ໂດຍແບ່ງຕາມກຸ່ມຜະລິດຕະພັນປະກັນໄພທົ່ວໄປ ເປັນຕົ້ນ: ຜະລິດຕະພັນປະກັນໄພການຂົນສົ່ງ, ປະກັນໄພ